ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້
ກອງທຶນຫລຸດຜ່ອນຄວາມທຸກຍາກ
ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ

ເລກທີ 0005/ປສຊ

# ຫນັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ

ສ້ອມແປງຫ້ອງການໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ

ສັນຍາເລກທີ: W-001

ເຖິງ: ______________________

1. ລັດຖະບານ ສປປ ລາວ ໄດ້ຮັບທຶນກູ້ຢືມ ຈາກສະມາຄົມພັດທະນາສາກົນ (IDA), ທະນາຄານໂລກ ເພື່ອຈັດຕັ້ງປະຕິບັດ ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ແລະ ມີຈຸດປະສົງທີ່ຈະນຳໃຊ້ທຶນ ສ່ວນໜຶ່ງ ເຂົ້າໃນການສ້ອມແປງຫ້ອງການ ດ້ວຍການປະມູນແບບສົມທຽບລາຄາ.
2. ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ຂໍເຊີນບໍລິສັດຂອງທ່ານ ເຂົ້າຍື່ນຊອງ ປະມູນແບບສົມທຽບລາຄາ ສຳລັບການສ້ອມແປງຫ້ອງການໂຄງການດັ່ງກ່າວ, ໄລຍະເວລາໃນການສ້ອມແປງ ແມ່ນຫົກສິບ (60) ວັນ.
3. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນແບບສົມທຽບລາຄາ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງ ປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ຊອງປະມູນຕ້ອງສົ່ງກ່ອນເວລາ 14:00 ໂມງ ຂອງວັນທີ 29 ທັນວາ 2023 ຢູ່ທີ່ຫ້ອງການກອງທຶນຫລຸດຜ່ອນຄວາມທຸກຍາກ, ແລະ ຊອງປະມູນສົມທຽບລາຄາທຸກໆຊອງ ຈະໄດ້ເປີດໃນເວລາ 14:00 ໂມງ ຂອງວັນທີ 29 ທັນວາ 2023 ຢູ່ທີ່ ຫ້ອງການກອງທຶນຫລຸດຜ່ອນຄວາມທຸກຍາກ ຕັ້ງຢູ່ໃນຫ້ອງການລັດຖະບານ, ຖະໜົນສີສະຫວາດ, ບ້ານນາໄຮ່ດຽວ, ເມືອງ ຈັນທະບູລີ, ນະຄອນຫລວງວຽງຈັນ, ສປປ ລາວ. ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນ ທີ່ ສົນໃຈຕ້ອງການເຂົ້າຮ່ວມ.
5. ທ່ານສາມາດສອບຖາມຂໍ້ມູນເພີ່ມເຕີມ ໄດ້ທີ່ຫ້ອງການ ທລຍ, ຕາມວັນ ແລະ ເວລາເຮັດວຽກ ໂທ: 261479-80.

ຜູ້ອຳນວຍການ

ພັດນະຄອນ ຄົມທະມີໄຊ